ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສໍານັກງານປົກປ້ອງເງິນຝາກ ເລກທີ 08 /ສປງ

ນະຄອນຫຼວງວຽງຈັນ, ວັນທີ 29 ມັງກອນ 2021

# ແຈ້ງການ

**ເຖິງ:** ບັນດາສະມາຊິກຂອງ ສໍານັກງານປົກປ້ອງເງິນຝາກ.

**ເລື່ອງ:** ການປັບປຸງແຈ້ງການແນະນໍາ ການຄິດໄລ່ ແລະ ການຈ່າຍເບ້ຍປະກັນເງິນຝາກ ເລກທີ 04/ສປງ, ລົງວັນທີ 13 ມັງກອນ 2020 ແລະ ການສົ່ງຂໍ້ມູນລາຍງານປະຈໍາເດືອນ ໃຫ້ ສປງ.

- ອີງຕາມດໍາລັດວ່າດ້ວຍການປົກປ້ອງເງິນຝາກ ເລກທີ 329/ລບ, ລົງວັນທີ 25 ຕຸລາ 2017;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສໍານັກງານປົກປ້ອງເງິນຝາກ ເລກທີ 68/ທຫລ, ລົງວັນທີ 22 ມັງກອນ 2019;
- ອີງຕາມຄໍາແນະນໍາວິທີຄິດໄລ່ ແລະ ຈ່າຍເບ້ຍປະກັນເງິນຝາກ ເລກທີ 02/ສປງ, ລົງວັນທີ 29 ມັງກອນ 2021.

ສໍານັກງານປົກປ້ອງເງິນຝາກ ຂໍແຈ້ງມາຍັງທ່ານຊາບວ່າ ປັດຈຸບັນສໍານັກງານປົກປ້ອງເງິນຝາກ ໄດ້ປັບປຸງ "ແຈ້ງການແນະນໍາ ການຄິດໄລ່ ແລະ ການຈ່າຍເບ້ຍປະກັນເງິນຝາກ ເລກທີ 04/ສປງ, ລົງວັນທີ 13 ມັງກອນ 2020" ມາເປັນ "ຄໍາແນະນໍາ ກ່ຽວກັບວິທີຄິດໄລ່ ແລະ ຈ່າຍເບ້ຍປະກັນເງິນຝາກ ເລກທີ 02/ສປງ, ລົງວັນທີ 29 ມັງກອນ 2021" ຕາມການສະເໜີຂອງບັນດາສະມາຊິກ (ລາຍລະອຽດມີເອກະສານຄັດຕິດມາພ້ອມນີ້). ສະນັ້ນ, ເພື່ອເຮັດໃຫ້ການສະໜອງຂໍ້ມູນຂອງສະມາຊິກ ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງ ໜ້າທີ່ວຽກງານໃນໄລຍະໃໝ່ ໂດຍສະເພາະການຄິດໄລ່ເບ້ຍປະກັນເງິນຝາກໃຫ້ສອດຄ່ອງກັບນິຕິກໍາດັ່ງກ່າວ ສໍານັກງານປົກປ້ອງເງິນຝາກ ຈຶ່ງໄດ້ປັບປຸງບາງແບບພິມລາຍງານ ດັ່ງນີ້:

1) ເງິນຝາກທີ່ໄດ້ຮັບການປົກປ້ອງ (ແບບພິມລາຍງານ ສປງ 01) ສະບັບປັບປຸງ;
2) ເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ (ແບບພິມລາຍງານ ສປງ 02) ສະບັບປັບປຸງ;
3) ເພດານເງິນຝາກທີ່ໄດ້ຮັບການປົກປ້ອງ (ແບບພິມລາຍງານ ສປງ 03) ສະບັບປັບປຸງ;

ສໍາລັບຂໍ້ມູນອື່ນໆ ໃຫ້ບັນດາສະມາຊິກສືບຕໍ່ສົ່ງໃຫ້ສໍານັກງານປົກປ້ອງເງິນຝາກ ຕາມແບບພິມເກົ່າ ດັ່ງນີ້:

❖ **ສໍາລັບທະນາຄານທຸລະກິດທີ່ເປັນສະມາຊິກຂອງ ສໍານັກງານປົກປ້ອງເງິນຝາກ:**

1) ໃບດຸ່ນດ່ຽງ (ລວມທຸກສະກຸນເງິນທຽບເທົ່າກີບ ແລະ ແຍກຕາມປະເພດສະກຸນເງິນ);
2) ໃບລາຍງານຖານະການເງິນ;
3) ໃບລາຍງານຜົນການດໍາເນີນງານ;
4) ໃບລາຍງານຄວາມພຽງພໍຂອງທຶນ;
5) ໃບລາຍງານຊັບສິນສ່ຽງໃນໃບສະຫຼຸບຊັບສົມບັດ;
6) ໃບລາຍງານຊັບສິນສ່ຽງນອກໃບສະຫຼຸບຊັບສົມບັດ;
7) ອັດຕາດອກເບ້ຍເງິນຝາກ ແລະ ດອກເບ້ຍເງິນກູ້;
8) ອັດຕາແລກປ່ຽນເງິນຕາຕ່າງປະເທດ (ອັດຕາແລກປ່ຽນປິດບັນຊີທ້າຍເດືອນ);

❖ **ສຳລັບສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກທີ່ເປັນສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ:**

1) ໃບລາຍງານຂໍ້ມູນທົ່ວໄປຂອງສະຖາບັນການເງິນ;
2) ໃບລາຍງານຖານະການເງິນ (ໃບສະຫຼຸບຊັບສິນບັດ);
3) ໃບລາຍງານຜົນການດຳເນີນງານ (ໃບລາຍງານຜົນໄດ້ຮັບ);
4) ໃບລາຍງານການສັງລວມຂໍ້ມູນສິນເຊື່ອໝວດປົກກະຕິ;
5) ໃບລາຍງານການສັງລວມຂໍ້ມູນສິນເຊື່ອໝວດປັບປຸງໂຄງສ້າງໜີ້;
6) ໃບລາຍງານການສັງລວມຂໍ້ມູນສິນເຊື່ອທີ່ຕິດຕາມຢູ່ນອກຜັງ;
7) ໃບລາຍງານຂໍ້ມູນເງິນຝາກ ແລະ ຮຸ້ນສະມາຊິກ ສກຈຣ;
8) ໃບລາຍງານຂໍ້ມູນອັດຕາດອກເບ້ຍເງິນຝາກ ແລະ ສິນເຊື່ອ;
9) ໃບດຸ່ນດ່ຽງບັນຊີ 06 ຫ້ອງ;

ສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ ຕ້ອງສົ່ງຂໍ້ມູນລາຍງານດັ່ງກ່າວ ໃຫ້ສຳນັກງານປົກປ້ອງເງິນຝາກ ໃນຮູບແບບເອກະສານ (Hardcopy) ພາຍໃນກຳນົດເວລາ ດັ່ງນີ້:

1. ສະມາຊິກທີ່ບໍ່ມີສາຂາຢູ່ຕ່າງແຂວງ ໃຫ້ສົ່ງຂໍ້ມູນຮອດ ສຳນັກງານປົກປ້ອງເງິນຝາກ ພາຍໃນ 05 ວັນລັດຖະການ ຂອງເດືອນຕໍ່ມາ;
2. ສະມາຊິກທີ່ມີສາຂາຢູ່ຕ່າງແຂວງ ໃຫ້ສົ່ງຂໍ້ມູນຮອດ ສຳນັກງານປົກປ້ອງເງິນຝາກ ພາຍໃນ 07 ວັນລັດຖະການ ຂອງເດືອນຕໍ່ມາ;
3. ສະມາຊິກທີ່ມີສາຂາຢູ່ຕ່າງແຂວງ ແລະ ຕ່າງປະເທດ ໃຫ້ສົ່ງຂໍ້ມູນຮອດ ສຳນັກງານປົກປ້ອງເງິນຝາກ ພາຍໃນ 10 ວັນລັດຖະການ ຂອງເດືອນຕໍ່ມາ;

ກໍລະນີບໍ່ສາມາດສົ່ງຂໍ້ມູນລາຍງານ ໃຫ້ສຳນັກງານປົກປ້ອງເງິນຝາກ ຕາມເວລາທີ່ກຳນົດ ສະມາຊິກຕ້ອງແຈ້ງເປັນລາຍລັກອັກສອນເຖິງ ສຳນັກງານປົກປ້ອງເງິນຝາກ ພ້ອມທັງລະບຸເຫດຜົນທີ່ບໍ່ສາມາດສົ່ງຂໍ້ມູນລາຍງານ.

ພ້ອມດຽວກັນນີ້, ໃຫ້ສະມາຊິກນຳສົ່ງຂໍ້ມູນລາຍງານດັ່ງກ່າວ ໃຫ້ສຳນັກງານປົກປ້ອງເງິນຝາກ ໂດຍກົງ ຢູ່ທີ່ຫ້ອງການຂອງ ສຳນັກງານປົກປ້ອງເງິນຝາກ (ຕຶກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊັ້ນ 4), ຖະໜົນໄກສອນ ພົມວິຫານ, ບ້ານໂພນສະອາດ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

ແຈ້ງການສະບັບນີ້ ໃຊ້ປ່ຽນແທນແຈ້ງການ 04 ສະບັບຄື: ① ແຈ້ງການ ກ່ຽວກັບການສົ່ງຂໍ້ມູນລາຍງານປະຈຳເດືອນ ໃຫ້ສຳນັກງານປົກປ້ອງເງິນຝາກ ເລກທີ 33/ສປງ, ລົງວັນທີ 24 ພຶດສະພາ 2019, ② ແຈ້ງການ ກ່ຽວກັບ ການປັບປຸງ ແລະ ເພີ່ມເຕີມບາງຂໍ້ມູນລາຍງານ ທີ່ສົ່ງໃຫ້ສຳນັກງານປົກປ້ອງເງິນຝາກ ເລກທີ 45/ສປງ, ລົງວັນທີ 03 ມີນາ 2020, ③ ແຈ້ງການ ກ່ຽວກັບການນຳສົ່ງປື້ມລາຍງານຖານະການເງິນ ປະຈຳເດືອນ ໃຫ້ສຳນັກງານປົກປ້ອງເງິນຝາກ ເລກທີ 68/ສປງ, ລົງວັນທີ 13 ສິງຫາ 2020 ແລະ ④ ແຈ້ງການ ການສົ່ງຂໍ້ມູນລາຍງານ ປະຈຳເດືອນ ໃຫ້ສຳນັກງານປົກປ້ອງເງິນຝາກ ເລກທີ 94/ສປງ, ລົງວັນທີ 23 ກັນຍາ 2020.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ ເລີ່ມແຕ່ເດືອນ **ມັງກອນ 2021** ເປັນຕົ້ນໄປ.

**ຫົວໜ້າສຳນັກງານປົກປ້ອງເງິນຝາກ**

ທະນາຄານແຫ່ງ ສປປ ລາວ

ສຳນັກງານປົກປ້ອງເງິນຝາກ



**ແສງດາວວີ ວົງຄຳຊາວ**